**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 14375 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 23 ມິຖຸນາ 2025

# ຂໍ້ຕົກລົງ
# ວ່າດ້ວຍການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ

- ອີງຕາມ ກົດໝາຍ ວ່າດ້ວຍການທາງນ້ຳ ສະບັບເລກທີ 34/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມທາງນ້ຳ ສະບັບເລກທີ 13360/ກທນ, ລົງວັນທີ 11 ມິຖຸນາ 2025.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ຕິດຕາມ ກວດກາ ວຽກງານການຂຸດຄົ້ນ ແລະ ການດຳເນີນທຸລະກິດກ່ຽວກັບ ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ເປັນຕົ້ນ ຫີນແຮ່, ຊາຍ ແລະ ດິນດຳ ເພື່ອຫຼຸດຜ່ອນຜົນກະທົບຕໍ່ ລະບົບນິເວດ, ການເດີນເຮືອ ແລະ ໂຄງສ້າງຂອງແມ່ນ້ຳ ເຮັດໃຫ້ການຈັດຕັ້ງປະຕິບັດ ວຽກງານດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແລະ ເປັນມິດຕໍ່ສິ່ງແວດລ້ອມ. ແນໃສ່ເຮັດໃຫ້ການນຳໃຊ້ຊັບພະຍາກອນດັ່ງກ່າວໃຫ້ມີຄວາມຍືນຍົງ ພ້ອມທັງປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ແມ່ນ ການ ດູດ, ຕັກ ແລະ ຈົກ ຫີນແຮ່, ຊາຍ ແລະ ດິນດຳ ທີ່ຢູ່ຕາມແມ່ນ້ຳ ໂດຍການນຳໃຊ້ ພາຫະນະກົນຈັກ, ອຸປະກອນ ແລະ ເຄື່ອງມືອື່ນໆ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ແມ່ນ້ຳ** ໝາຍເຖິງ ແມ່ນ້ຳຂອງ, ແມ່ນ້ຳອື່ນ ແລະ ສາຂາຂອງແມ່ນ້ຳດັ່ງກ່າວ;

2. **ໂຄງສ້າງຂອງແມ່ນ້ຳ** ໝາຍເຖິງ ຕາຝັ່ງ, ພື້ນທ້ອງນ້ຳ, ເກາະ, ດອນ, ແກ້ງ, ຄອນ ແລະ ຫາດ;

3. **ວັດສະດຸກໍ່ສ້າງຕາມແມ່ນ້ຳ** ໝາຍເຖິງ ວັດສະດຸທີ່ນຳໃຊ້ສຳລັບການກໍ່ສ້າງ ເປັນຕົ້ນ ຫີນແຮ່, ຊາຍ, ດິນດຳ ທີ່ຜ່ານການ ວິໄຈ ແລະ ຢັ້ງຢືນຈາກຂະແໜງການພະລັງງານ ແລະ ບໍ່ແຮ່;

4. ການດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໝາຍເຖິງ ການດຳເນີນກິດຈະການກ່ຽວກັບການຂຸດຄົ້ນ ຫີນແຮ່, ຊາຍ ແລະ ດິນດຳ ຢູ່ຕາມແມ່ນ້ຳ;

5. **ຫີນແຮ່** ໝາຍເຖິງ ຫີນທີ່ເກີດຂຶ້ນຕາມທຳມະຊາດ ຕາມແມ່ນ້ຳທີ່ມີຂະໜາດແຕ່ 2.00-60.00 ມິນລີແມັດ;

6. **ຊາຍ** ໝາຍເຖິງ ການສະສົມຂອງຕະກອນ ຕາມແມ່ນ້ຳທີ່ມີຂະໜາດແຕ່ 0.06-2.00 ມິນລີແມັດ;

7. **ດິນດຳ** ໝາຍເຖິງ ດິນທີ່ເກີດຈາກການທັບຖົມຂອງທຳມະຊາດ ຢູ່ຕາມໜ້າດິນຂອງຫາດຕາມແມ່ນ້ຳ;

8. **ແມ່ນ້ຳຊາຍແດນ** ໝາຍເຖິງ ແມ່ນ້ຳ ທີ່ໄຫຼຜ່ານເສັ້ນຊາຍແດນ ຕາມສົນທິສັນຍາກ່ຽວກັບຊາຍແດນທີ່ ສປປ ລາວ ແລະ ປະເທດໃກ້ຄຽງ ເປັນພາຄີ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຢູ່ໃນ ສປປ ລາວ.

## ໝວດທີ 2
## ຂະໜາດ, ພື້ນທີ່ ແລະ ຄວາມເລິກ ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ

**ມາດຕາ 5 ຂະໜາດການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ມີ ສາມ ຂະໜາດ ດັ່ງນີ້:

1. ຂະໜາດໃຫຍ່ ມີເນື້ອທີ່ ແຕ່ 5.10-10.00 ເຮັກຕາ;
2. ຂະໜາດກາງ ມີເນື້ອທີ່ ແຕ່ 1.10-5.00 ເຮັກຕາ;
3. ຂະໜາດນ້ອຍ ມີເນື້ອທີ່ ບໍ່ເກີນ 1.00 ເຮັກຕາ.

**ມາດຕາ 6 ການກຳນົດພື້ນທີ່ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ການກຳນົດພື້ນທີ່ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ແມ່ນ ການສຳຫຼວດ, ປັກຫຼັກໝາຍຂອບເຂດສຳປະທານ ຊຶ່ງໄດ້ກຳນົດມາດຕະຖານ ດັ່ງນີ້:

1. ທ່າເຮືອ, ຄອງເດີນເຮືອ, ສະຖານີສູບນ້ຳ ແລະ ເຂດກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ:
   1) ສຳລັບແມ່ນ້ຳຂອງ
      - ທ່າເຮືອ, ສະຖານີສູບນ້ຳ ແລະ ເຂດກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ໄລຍະຫ່າງຢ່າງໜ້ອຍ 500 ແມັດ;
      - ຄອງເດີນເຮືອ ໄລຍະຫ່າງຢ່າງໜ້ອຍ 30 ແມັດ.
   2) ສຳລັບແມ່ນ້ຳອື່ນ ແລະ ສາຂາຂອງແມ່ນ້ຳ
      - ທ່າເຮືອ, ສະຖານີສູບນ້ຳ ແລະ ເຂດກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ໄລຍະຫ່າງຢ່າງໜ້ອຍ 500 ແມັດ;
      - ຄອງເດີນເຮືອ ໄລຍະຫ່າງຢ່າງໜ້ອຍ 20 ແມັດ.
2. ເຂດລັຽງປາກະຊັງ, ຮ້ານອາຫານແຄມແມ່ນ້ຳ, ໂຮງໜໍ, ໂຮງແຮມ, ໂຮງຮຽນ, ວັດ, ເຂດຊຸມຊົນ, ແຫຼ່ງວັດຖຸບູຮານ, ສະຖານສຳຄັນທາງດ້ານປະຫວັດສາດ ແລະ ເຂດອະນຸລັກ ໄລຍະຫ່າງຢ່າງໜ້ອຍ 1,000 ແມັດ;
3. ດອນ (ຫົວດອນ, ກາງດອນ ແລະ ຫາງດອນ) ແລະ ຕາຝັ່ງ:
   1) ແມ່ນ້ຳຂອງທີ່ບໍ່ແມ່ນແມ່ນ້ຳຊາຍແດນ
      - ຈາກຫົວດອນ ແລະ ຫາງດອນ ໄລຍະຫ່າງຢ່າງໜ້ອຍ 1,000 ແມັດ;
      - ຈາກຕາຝັ່ງດອນ ໄລຍະຫ່າງຢ່າງໜ້ອຍ 50 ແມັດ;
      - ຈາກຕາຝັ່ງແມ່ນ້ຳ ໄລຍະຫ່າງຢ່າງໜ້ອຍ 50 ແມັດ;

      ການຂຸດຄົ້ນຕ້ອງບໍ່ເກີນ ໜຶ່ງສ່ວນສີ່ (1/4) ຂອງຄວາມກວ້າງ ຂອງແມ່ນ້ຳ ໃນລະດູການຂຸດຄົ້ນ.

2) ແມ່ນ້ຳຂອງທີ່ເປັນແມ່ນ້ຳຊາຍແດນ

- ຈາກຫົວດອນ ແລະ ຫາງດອນ ໄລຍະຫ່າງຢ່າງໜ້ອຍ 800 ແມັດ;
- ຈາກຕາຝັ່ງດອນ ໄລຍະຫ່າງຢ່າງໜ້ອຍ 100 ແມັດ;
- ຈາກຕາຝັ່ງແມ່ນ້ຳ ໄລຍະຫ່າງຢ່າງໜ້ອຍ 100 ແມັດ;

ການຂຸດຄົ້ນຕ້ອງບໍ່ເກີນ ໜຶ່ງສ່ວນສີ່ (1/4) ຂອງຄວາມກວ້າງ ຂອງແມ່ນ້ຳ ໃນລະດູການຂຸດຄົ້ນ.

3) ແມ່ນ້ຳອື່ນ ແລະ ສາຂາຂອງແມ່ນ້ຳ

- ຈາກຫົວດອນ ແລະ ຫາງດອນ ໄລຍະຫ່າງຢ່າງໜ້ອຍ 500 ແມັດ;
- ຈາກຕາຝັ່ງແມ່ນ້ຳ ໄລຍະຫ່າງຢ່າງໜ້ອຍ 30 ແມັດ ຫຼື ສອງສ່ວນຫ້າ (2/5) ຂອງ ຄວາມກວ້າງຂອງແມ່ນ້ຳ.

4. ຂົວຂ້າມແມ່ນ້ຳອື່ນ ແລະ ສາຂາຂອງແມ່ນ້ຳ ໄລຍະຫ່າງຢ່າງໜ້ອຍ 1,000 ແມັດ;

5. ຂົວທາງລົດໄຟ ໃຫ້ປະຕິບັດ ດັ່ງນີ້:

- ຂົວທາງລົດໄຟທີ່ມີຄວາມຍາວໜ້ອຍກວ່າ 100 ແມັດ ຢູ່ດ້ານເໜືອນ້ຳໄຫຼ ແມ່ນ 500 ແມັດ ແລະ ຢູ່ດ້ານລຸ່ມນ້ຳໄຫຼ ແມ່ນ 1,000 ແມັດ;
- ຂົວທາງລົດໄຟທີ່ມີຄວາມຍາວຫຼາຍກວ່າ 100 ແມັດ ແຕ່ໜ້ອຍກວ່າ 500 ແມັດ ຢູ່ດ້ານເໜືອນ້ຳໄຫຼ ແມ່ນ 500 ແມັດ ແລະ ຢູ່ດ້ານລຸ່ມນ້ຳໄຫຼ ແມ່ນ 2,000 ແມັດ;
- ຂົວທາງລົດໄຟທີ່ມີຄວາມຍາວຫຼາຍກວ່າ 500 ແມັດ ຢູ່ດ້ານເໜືອນ້ຳໄຫຼ ແມ່ນ 500 ແມັດ ແລະ ຢູ່ດ້ານລຸ່ມນ້ຳໄຫຼ ແມ່ນ 3,000 ແມັດ.

ສຳລັບການປັກຫຼັກໝາຍຂອບເຂດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໃຫ້ຝັງຫຼັກເບຕົງ ຢູ່ລຽບຕາມຕາຝັ່ງ ຫຼື ຂອບຫາດ ຕາມສະພາບພື້ນທີ່ຕົວຈິງ ທີ່ແນມເຫັນໄດ້ງ່າຍ.

**ມາດຕາ 7 ຄວາມເລິກການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ຄວາມເລິກການຂຸດຄົ້ນ ຫີນແຮ່, ຊາຍ ແລະ ດິນດຳ ຕາມແມ່ນ້ຳ ຕ້ອງປະຕິບັດ ດັ່ງນີ້:

1. ການຂຸດຄົ້ນຊາຍຢູ່ຫາດ ຄວາມເລິກບໍ່ໃຫ້ເກີນ 05 ແມັດ;
2. ການຂຸດຄົ້ນຊາຍຢູ່ພື້ນທ້ອງນ້ຳ ຄວາມເລິກບໍ່ໃຫ້ເກີນ 03 ແມັດ;
3. ການຂຸດຄົ້ນຫີນແຮ່ຢູ່ພື້ນທ້ອງນ້ຳ ຄວາມເລິກບໍ່ໃຫ້ເກີນ 10 ແມັດ;
4. ການຂຸດຄົ້ນດິນດຳຢູ່ຫາດ ຄວາມເລິກບໍ່ໃຫ້ເກີນ 02 ແມັດ.

## ໝວດທີ 3
## ການຂໍອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ

**ມາດຕາ 8 ການຂໍອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕ້ອງຍື່ນຄຳຮ້ອງຕາມແບບພິມຕໍ່ ກົມທາງນ້ຳ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ຕາມຂະໜາດການຂຸດຄົ້ນ.

**ມາດຕາ 9 ເງື່ອນໄຂຂອງຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ;
2. ມີຖານະທາງການເງິນ ຫຼື ແຫຼ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນພາຍໃນຂອງ ສປປ ລາວ;

ຯ.

3. ມີວິຊາການທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການ;

4. ມີອຸປະກອນ, ເຄື່ອງມື, ພາຫະນະທີ່ໄດ້ມາດຕະຖານ ແລະ ຈຳນວນທີ່ເໝາະສົມກັບຂະໜາດ ທີ່ໄດ້ຮັບອະນຸຍາດຂຸດຄົ້ນ;

5. ມີສະຖານທີ່ເກັບມ້ຽນ ຫີນແຮ່, ຊາຍ ແລະ ດິນດຳ ທີ່ເໝາະສົມ.

**ມາດຕາ 10 ເອກະສານປະກອບຂໍອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ການຂໍອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕາມແບບພິມ;
2. ໃບຢັ້ງຢືນທີ່ຢູ່ອາຍຸນຳໃຊ້ບໍ່ເກີນ ສາມ ເດືອນ;
3. ປະຫວັດທົ່ວໄປຂອງຜູ້ຂໍອະນຸຍາດ;
4. ໃບທະບຽນວິສາຫະກິດ;
5. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດຳເນີນທຸລະກິດ;
6. ໃບຢັ້ງຢືນເຕັກນິກຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;
7. ໃບຢັ້ງຢືນພົນວິໄຈແຮ່ທາດ;
8. ໃບຢັ້ງຢືນສິ່ງແວດລ້ອມ;
9. ໃບຢັ້ງຢືນຖານະການເງິນ ຫຼື ເອກະສານສະໜັບສະໜູນຈາກສະຖາບັນການເງິນ;
10. ບັນຊີຍານພາຫະນະ, ກົນຈັກ, ອຸປະກອນ ແລະ ສຳເນົາໃບກວດກາເຕັກນິກຂອງພາຫະນະ.

**ມາດຕາ 11 ເອກະສານປະກອບຂໍອະນຸຍາດສືບຕໍ່ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ການຂໍອະນຸຍາດສືບຕໍ່ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດສືບຕໍ່ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳຕາມແບບພິມ;
2. ໃບອະນຸຍາດດຳເນີນການຂຸດຄົ້ນຂະແໜງການໂຍທາທິການ ແລະ ຂົນສົ່ງ (ສະບັບຕົ້ນ);
3. ໃບທະບຽນວິສາຫະກິດ;
4. ໃບຢັ້ງຢືນການມອບພັນທະອາກອນ ແລະ ໃບແຈ້ງມອບພັນທະອາກອນ;
5. ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ;
6. ໃບແຈ້ງມອບຄ່າຊົດເຊີຍຊັບພະຍາກອນທຳມະຊາດ;
7. ໃບຢັ້ງຢືນບໍລິມາດການຂຸດຄົ້ນປະຈຳປີ;
8. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ;
9. ຮູບຖ່າຍຂະໜາດ 3x4 ຈຳນວນ 03 ໃບ.

## ໝວດທີ 4
## ການອອກໃບອະນຸຍາດ ຂຸດຄົ້ນ ແລະ ດຳເນີນທຸລະກິດຂຸດຄົ້ນ ວັດສະດຸກໍ່ສ້າງຕາມແມ່ນ້ຳ

**ມາດຕາ 12 ການອອກໃບອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ຂະແໜງທາງນ້ຳ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອອກໃບອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ພາຍຫຼັງໄດ້ລົງສຳຫຼວດ, ປັກຫຼັກໝາຍຂອບເຂດພື້ນທີ່ຂຸດຄົ້ນ ແລະ ໄດ້ຮັບໃບຢັ້ງຢືນ ທາງດ້ານເຕັກນິກ, ພົນວິໄຈແຮ່ທາດ ແລະ ສິ່ງແວດລ້ອມ ຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 13 ການອອກໃບອະນຸຍາດດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ຂະແໜງແຜນການ ແລະ ການເງິນ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອອກໃບອະນຸຍາດດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ພາຍຫຼັງໄດ້ຮັບໃບອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ.

## ໝວດທີ 5
## ພື້ນທີ່ເກັບມ້ຽນ, ການເກັບມ້ຽນ ແລະ ຂົນສົ່ງ ວັດສະດຸກໍ່ສ້າງຕາມແມ່ນ້ຳ

**ມາດຕາ 14 ພື້ນທີ່ເກັບມ້ຽນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ພື້ນທີ່ເກັບມ້ຽນວັດສະດຸກໍ່ສ້າງຕາມແມ່ນ້ຳ ສະໜາມ 1 ແລະ 2 ຕ້ອງປະຕິບັດ ດັ່ງນີ້:

1. ຫ່າງຈາກຂອບທາງຫຼວງແຫ່ງຊາດ ຢ່າງໜ້ອຍ 50 ແມັດ;
2. ຫ່າງຈາກຂອບທາງຫຼວງ ແຂວງ, ເມືອງ, ຊົນນະບົດ ແລະ ສະເພາະ ຢ່າງໜ້ອຍ 30 ແມັດ;
3. ຫ່າງຈາກບ້ານເຮືອນຂອງປະຊາຊົນ ແລະ ສະຖານທີ່ຕ່າງໆ ຢ່າງໜ້ອຍ 500 ແມັດ;
4. ຫ່າງຈາກໂຮງຮຽນ, ໂຮງໝໍ, ໂຮງແຮມ, ວັດ, ເຂດຊຸມຊົນ, ແຫຼ່ງວັດຖຸບູຮານ, ສະຖານທີ່ສຳຄັນທາງດ້ານປະຫວັດສາດ ແລະ ເຂດອະນຸລັກ ຢ່າງໜ້ອຍ 1,000 ແມັດ;
5. ຫ່າງຈາກ ນ້ຳສາຂາ ຢ່າງໜ້ອຍ 200 ແມັດ.

**ມາດຕາ 15 ການເກັບມ້ຽນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ການເກັບມ້ຽນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕ້ອງປະຕິບັດ ດັ່ງນີ້:

1. ມີຮົ້ວອ້ອມເປັນສິ່ງກັ້ງບັງເພື່ອບໍ່ໃຫ້ລົມພັດປິວໄປໃສ່ບ່ອນອື່ນ;
2. ກອງຫີນແຮ່ຕ້ອງບໍ່ໃຫ້ສູງເກີນ 10 ແມັດ;
3. ກອງຊາຍ ຫຼື ດິນດຳ ຕ້ອງບໍ່ໃຫ້ສູງເກີນ 05 ແມັດ;

ສຳລັບການກອງ ຊາຍ ຫຼື ດິນດຳ ຕ້ອງກອງໄວ້ຢູ່ເບື້ອງໃນຂອງກອງຫີນແຮ່ ເພື່ອຫຼຸດຜ່ອນຜົນກະທົບຈາກກະແສລົມ.

**ມາດຕາ 16 ການຂົນສົ່ງວັດສະດຸກໍ່ສ້າງຕາມແມ່ນ້ຳ**

ການຂົນສົ່ງວັດສະດຸກໍ່ສ້າງຕາມແມ່ນ້ຳ ຕ້ອງປະຕິບັດ ດັ່ງນີ້:

1. ມີຜ້າບັດປົກຄຸມຢ່າງແໜ້ນໜາ ເພື່ອປ້ອງກັນບໍ່ໃຫ້ວັດສະດຸຕົກເຮ່ຍໃນເວລາຂົນສົ່ງ;
2. ການຂົນສົ່ງວັດສະດຸກໍ່ສ້າງຕາມແມ່ນ້ຳ ຕ້ອງປະຕິບັດຕາມ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດນ້ຳໜັກລວມສູງສຸດຂອງລົດບັນທຸກ ສະບັບເລກທີ 9393/ຍທຂ, ລົງວັນທີ 13 ເມສາ 2023;
3. ລ້າງຕີນລົດຂົນສົ່ງໃຫ້ສະອາດ ກ່ອນແລ່ນເຂົ້າທາງ ປູຢາງ ຫຼື ປູເບຕົງ;
4. ການຂົນສົ່ງວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ນຳໃຊ້ທາງ ປູດິນແດງ ແລະ ປູແຮ່ ໃນຊ່ວງລະດູຝົນຕ້ອງຫຼຸດນ້ຳໜັກລົງ ຊາວສ່ວນຮ້ອຍ (20%) ຂອງນ້ຳໜັກບັນທຸກລວມສູງສຸດ.

## ໝວດທີ 6
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ

**ມາດຕາ 17 ສິດຂອງຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ມີສິດ ດັ່ງນີ້:

1. ເປັນຄູ່ຮ່ວມສັນຍາກັບ ຂະແໜງທາງນ້ຳ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;

2. ຂຸດຄົ້ນວັດສະດຸກໍ່ສ້າງຕາມຂອບເຂດທີ່ໄດ້ຮັບອະນຸຍາດ;

3. ໄດ້ຮັບ ການສົ່ງເສີມ ແລະ ອໍານວຍຄວາມສະດວກຈາກພາກລັດຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ;

4. ໄດ້ຮັບ ການປົກປ້ອງການລົງທຶນ ຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທໍາ ທີ່ໄດ້ມາຈາກການລົງທຶນຂອງຕົນ;

5. ນໍາໃຊ້ພື້ນທີ່ທີ່ໄດ້ຮັບອະນຸຍາດຂຸດຄົ້ນ ແລະ ພື້ນທີ່ເກັບມ້ຽນວັດສະດຸກໍ່ສ້າງຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;

6. ເປັນເຈົ້າກໍາມະສິດຕໍ່ຊັບສິນ ໃນການລົງທຶນທຸລະກິດຂອງຕົນ;

7. ນໍາໃຊ້ສິດອື່ນ ຕາມທີ່ກໍານົດໄວ້ໃນ ກົດໝາຍ.

**ມາດຕາ 18 ພັນທະຂອງຜູ້ດໍາເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນໍ້າ**

ຜູ້ດໍາເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນໍ້າ ມີພັນທະ ດັ່ງນີ້:

1. ປະຕິບັດຕາມ ສັນຍາດໍາເນີນທຸລະກິດ, ສ້າງ ບົດວິພາກເສດຖະກິດ-ເຕັກນິກ, ບົດວິໄຈແຮ່ທາດ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ - ສັງຄົມ ແລະ ທໍາມະຊາດ ຢ່າງເຂັ້ມງວດ;

2. ດໍາເນີນການຂຸດຄົ້ນ ໃຫ້ຖືກຕ້ອງຕາມແຜນດໍາເນີນການ, ແຜນຜັງ, ມາດຕະຖານເຕັກນິກ, ກໍານົດໝາຍເຕັກນິກ, ຂອບເຂດພື້ນທີ່ ແລະ ບໍລິມາດທີ່ໄດ້ຮັບການອະນຸມັດ ພ້ອມທັງອໍານວຍຄວາມສະດວກໃຫ້ແກ່ຜູ້ຢູ່ອາໄສບໍລິເວນໃກ້ຄຽງ ໃນໄລຍະດໍາເນີນການຂຸດຄົ້ນ;

3. ໃຫ້ການຮ່ວມມືກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

4. ປະກອບສ່ວນເຂົ້າໃນການບູລະນະຮັກສາໂຄງລ່າງພື້ນຖານ ເປັນຕົ້ນ ເສັ້ນທາງທີ່ນໍາໃຊ້ໃນການຂົນສົ່ງ, ຄອງເດີນເຮືອ ແລະ ປ້ອງກັນຕາຝັ່ງເຈື່ອນ;

5. ພາຍຫຼັງການຂຸດຄົ້ນໃນແຕ່ລະປີ ຕ້ອງໄດ້ຟື້ນຟູສະພາບພື້ນທີ່ ໃຫ້ຄືນສູ່ສະພາບຄ້າຍຄືເດີມ;

6. ເສຍພາສີ, ອາກອນ, ຄ່າທໍານຽມ, ຄ່າບໍລິການ ແລະ ພັນທະອື່ນຕາມ ສັນຍາສໍາປະທານ, ກົດໝາຍ ແລະ ລະບຽບການ;

7. ຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນຈາກການກະທໍາຂອງຕົນ;

8. ສະຫຼຸບ ແລະ ລາຍງານ ການດໍາເນີນທຸລະກິດຂອງຕົນຕໍ່ ຂະແໜງທາງນໍ້າ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 7
## ສະມາຄົມຜູ້ດໍາເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນໍ້າ

**ມາດຕາ 19 ສະມາຄົມຜູ້ດໍາເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນໍ້າ**

ສະມາຄົມຜູ້ດໍາເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນໍ້າ ແມ່ນ ອົງການຈັດຕັ້ງສັງຄົມ ຊຶ່ງສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອເຕົ້າໂຮມບັນດາຫົວໜ່ວຍທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນໍ້າ ມີພາລະບົດບາດປະສານສົມທົບກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນໍ້າ, ໃຫ້ການຊ່ວຍເຫຼືອ, ປຶກສາ, ແນະນໍາ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງສະມາຊິກ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງສະມາຄົມຜູ້ດຳເນີນທຸລະກິດ ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ສະມາຄົມຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໃຫ້ສະມາຊິກ;

2. ສ້າງກົດລະບຽບການຄຸ້ມຄອງ ແລະ ເຄື່ອນໄຫວສະມາຄົມຂອງຕົນ;

3. ຄົ້ນຄວ້າ ແລະ ມີຄຳເຫັນໃນການສ້າງ ແລະ ປັບປຸງ ນິຕິກຳກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

4. ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

5. ຕິດຕາມການເຄື່ອນໄຫວຂອງສະມາຊິກ ໃຫ້ຖືກຕ້ອງ, ສອດຄ່ອງ ກັບກົດໝາຍ ແລະ ລະບຽບການ;

6. ໄກ່ເກ່ຍຂໍ້ຂັດແຍ່ງ ທີ່ເກີດຂຶ້ນຂອງສະມາຊິກ;

7. ສະເໜີຍ້ອງຍໍສະມາຊິກທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວທຸລະກິດ, ປະກອບສ່ວນພັດທະນາເສດຖະກິດ ແລະ ສັງຄົມ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສະມາຄົມຂອງຕົນ ຕໍ່ອົງການຄຸ້ມຄອງ ແລະ ກວດກາວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 ການສ້າງຕັ້ງ, ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະມາຄົມຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ຂັ້ນຕອນການສ້າງຕັ້ງ ສະມາຄົມຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ລວມທັງລະບອບແບບແຜນວິທີເຮັດວຽກ ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 22 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ໃບອະນຸຍາດດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳຂອງຜູ້ອື່ນ;

2. ລັກລອບຂຸດຄົ້ນ ຫີນແຮ່, ຊາຍ ແລະ ດິນດຳ ຢູ່ໃນພື້ນທີ່ເຂດສະຫງວນ;

3. ຂຸດຄົ້ນ ຫີນແຮ່, ຊາຍ ແລະ ດິນດຳ ຢູ່ຕາມແມ່ນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ;

4. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມື ໃນການກວດກາຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 23 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ຫ້າມ ຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ມີພຶດຕິກຳ ດັ່ງນີ້:

1. ຂາຍ, ເຊົ່າ ໃບອະນຸຍາດດຳເນີນທຸລະກິດຂອງຕົນໃຫ້ຜູ້ອື່ນ;

2. ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໂດຍບໍ່ຖືກຕ້ອງຕາມໃບຢັ້ງຢືນເຕັກນິກ ທີ່ໄດ້ຮັບຮອງ;

ລ.

3. ດຳເນີນການຂຸດຄົ້ນວັດສະດຸກໍ່ສ້າງ ໂດຍບໍ່ມີໃບອະນຸຍາດ ຫຼື ໃບອະນຸຍາດໝົດອາຍຸ;

4. ຂຸດຄົ້ນອອກນອກເຂດພື້ນທີ່ໄດ້ຮັບອະນຸຍາດ;

5. ບໍ່ດຳເນີນການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ພາຍຫຼັງໄດ້ຮັບອະນຸຍາດ;

6. ສົມຮູ້ຮ່ວມຄິດ ຫຼື ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຂອງລັດ;

7. ປົກປັງ, ປອມແປງ, ບິດເບືອນ ແລະ ທຳລາຍຂໍ້ມູນ ກ່ຽວກັບການດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຂອງຕົນ;

8. ບໍ່ໃຫ້ຄວາມຮ່ວມມື, ໝິ່ນປະໝາດ, ນາບຂູ່, ທຳຮ້າຍຮ່າງກາຍເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;

9. ຂຸດຄົ້ນໃນຊ່ວງເວລາ ແຕ່ 18:00 ໂມງ ຫາ 06:00 ໂມງ;

10. ຂຸດຄົ້ນໃນລະຫວ່າງ ທ້າຍເດືອນມິຖຸນາ ຫາ ທ້າຍເດືອນຕຸລາ ຂອງແຕ່ລະປີ;

11. ສົ່ງຂາຍວັດສະດຸກໍ່ສ້າງຕາມແມ່ນ້ຳ ອອກນອກປະເທດ ໂດຍບໍ່ໄດ້ຮັບອານຸຍາດ;

12. ລັກລອບນຳເອົາວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ຮັບໃຊ້ເຂົ້າໃນໂຄງການຂອງລັດ ໄປຂາຍ;

13. ລັກລອບຂຸດຄົ້ນເອົາຄຳຕົກຂ້ອນ ຫຼື ວັດຖຸມີຄ່າ ໃນເວລາຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

14. ໃຊ້ເຮືອດູດ, ເຮືອເວີ່ນ, ເຮືອຂົນຫີນແຮ່, ຊາຍ ແລະ ພາຫະນະປະເພດອື່ນ ທີ່ບໍ່ໄດ້ຂຶ້ນທະບຽນ;

15. ຈຳໜ່າຍວັດສະດຸກໍ່ສ້າງຕາມແມ່ນ້ຳ ໂດຍບໍ່ຖືກຕ້ອງຕາມລາຄາທີ່ ຂະແໜງການໂຍທາທິການ ແລະ ຂົນສົ່ງ ກຳນົດ;

16. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 24 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນຮຸ້ນສ່ວນ, ເປັນນັກວິຊາການໃຫ້ວິສາຫະກິດ ກ່ຽວກັບທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງລັດຖະການ;

3. ອອກໃບອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໃຫ້ບໍລິສັດດຽວ ເກີນ 01 ຈຸດ ສຳລັບເນື້ອທີ່ຂຸດຄົ້ນ ຂະໜາດໃຫຍ່ ແລະ ຂະໜາດກາງ ແລະ ເກີນ 02 ຈຸດ ສຳລັບເນື້ອທີ່ຂຸດຄົ້ນຂະໜາດນ້ອຍ;

4. ສົມຮູ້ຮ່ວມຄິດ, ທວງເອົາ, ຂໍເອົາ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ກົດໜ່ວງ, ຖ່ວງດຶງ, ເປີດເຜີຍ, ລຳອຽງ, ປອມແປງເອກະສານ ແລະ ຂໍ້ມູນ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກຂອງຕົນ;

5. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງ ຂອງຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

6. ໝິ່ນປະໝາດ, ໃຊ້ວາຈາ, ທ່າທີບໍ່ສຸພາບ ແລະ ນາບຂູ່ ຜູ້ດຳເນີນທຸລະກິດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ໝວດທີ 9
# ການຄຸ້ມຄອງ ແລະ ກວດກາ ວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ

**ມາດຕາ 25 ອົງການຄຸ້ມຄອງ ແລະ ກວດກາວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຢ່າງລວມສູນ ໂດຍມອບໃຫ້ກົມທາງນ້ຳ ເປັນຜູ້ຮັບຜິດຊອບໂດຍກົງ ຕາມພາລະບົດບາດຂອງຕົນ ແລະ ເປັນເຈົ້າການປະສານສົມທົບ ກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ປະກອບດ້ວຍ:

1. ກົມທາງນ້ຳ, ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງກົມທາງນ້ຳ ກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ກົມທາງນ້ຳ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ຍຸດທະສາດ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;
2. ຄົ້ນຄວ້າປັບປຸງ ມາດຕະຖານເຕັກນິກ, ກຳນົດໝາຍເຕັກນິກ ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;
3. ອອກໃບອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ມີເນື້ອທີ່ ແຕ່ 5.10 ຫາ 10.00 ເຮັກຕາ;
4. ສັ່ງໂຈະ ຫຼື ຍົກເລີກ ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ປະສານສົມທົບກັບ ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຕິດຕາມ ກວດກາ ການອອກອານຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ;
6. ພົວພັນ, ຮ່ວມມື ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ເປັນແມ່ນ້ຳຊາຍແດນ;
7. ສະຫຼຸບ ແລະ ລາຍງານ ວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;
2. ສະເໜີ ປັບປຸງກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;
3. ອອກໃບອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ມີເນື້ອທີ່ແຕ່ 1.10 ຫາ 5.00 ເຮັກຕາ;
4. ສັ່ງໂຈະ ຫຼື ຍົກເລີກ ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ປະສານສົມທົບກັບ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ໃນການຕິດຕາມ ກວດກາການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ຕົນ ແລະ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ອອກອະນຸຍາດ;

6. ພົວພັນ, ຮ່ວມມື ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ເປັນແມ່ນ້ຳຊາຍແດນ ຕາມການມອບໝາຍ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວ ວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

2. ສະເໜີ ປັບປຸງກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

3. ອອກໃບອະນຸຍາດຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ມີເນື້ອທີ່ ບໍ່ເກີນ 1.00 ເຮັກຕາ (ຍົກເວັ້ນແມ່ນ້ຳຂອງ ແລະ ແມ່ນ້ຳຊາຍແດນ);

4. ສັ່ງໂຈະ ຫຼື ຍົກເລີກ ການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ປະສານສົມທົບກັບ ຄະນະກຳມະການປົກຄອງ ເມືອງ, ນະຄອນ ໃນການຕິດຕາມ ກວດກາການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ທີ່ຕົນອອກອະນຸຍາດ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວ ວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ແລະ ຄະນະກຳມະການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ຄະນະກຳມະການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ຂະແໜງການ ແລະ ຄະນະກຳມະການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງມີສິດ ແລະ ໜ້າທີ່ ປະສານສົມທົບ, ໃຫ້ການຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ໃນການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 30 ເນື້ອໃນກວດກາ**

ການກວດກາວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

2. ກວດກາການເຄື່ອນໄຫວຂອງ ຜູ້ດຳເນີນທຸລະກິດກ່ຽວກັບການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ;

3. ມາດຕະຖານເຕັກນິກການຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ, ຜົນກະທົບຕໍ່ສິ່ງແວດລ້ອມ ທາງດ້ານທຳມະຊາດ ແລະ ສັງຄົມ.

**ມາດຕາ 31 ຮູບການກວດກາ**

ການກວດກາວຽກງານຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ມີສາມຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ, ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 32 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນການປະກອບສ່ວນເຂົ້າໃນການບູລະນະຮັກສາໂຄງລ່າງພື້ນຖານ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 33 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໂຈະ, ຖອນໃບອະນຸຍາດ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມທາງນ້ຳ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ຫ້ອງການ, ບັນດາກົມ, ສະຖາບັນ, ກອງ, ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 35 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍລະບຽບການກ່ຽວກັບການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດຳ ຕາມແມ່ນ້ຳຂອງ ແລະ ແມ່ນ້ຳຕ່າງໆ ຢູ່ ສປປ ລາວ ສະບັບເລກທີ 7737/ຍທຂ, ລົງວັນທີ 08 ມິຖຸນາ 2010.

ລັດຖະມົນຕີ

ງາມປະສົງ ເມືອງມະນີ